# ກອງປະຊຸມທຸລະກິດ ຄັ້ງທີ 14

## ຕາຕະລາງ ຂໍ້ສະເໜີ ໄດ້ຮັບຄໍາຕອບແລ້ວວ່າ ບໍ່ສາມາດແກ້ໄຂ
## (ປັບປຸງ ວັນທີ 22 ມີນາ 2023)

2023

# ຕາຕະລາງ ຂໍ້ສະເໜີ ໄດ້ຮັບຄຳຕອບແລ້ວວ່າບໍ່ສາມາດແກ້ໄຂ

# (ປັບປຸງ ວັນທີ 22 ມິນາ 2023)

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 1 | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ສະເໜີໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບ ກະຊວງສາທາລະນະສຸກ ເພື່ອທົບທວນຄືນ ຕໍ່ກັບ ລາຍການບັງຄັບສໍາລັບການກວດສຸຂະພາບຂອງແຮງງານ ໂດຍໃຫ້ເນັ້ນໃສ່ການກວດສະເພາະແຕ່ບາງລາຍການທີ່ຈໍາເປັນທີ່ສຸດສໍາລັບຂະແໜງການຕ່າງໆ. | **ອີງຕາມຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ14 ຄັ້ງວັນທີ 21 ມີນາ 2023**<br>• **ຄໍາເຫັນຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ**: ຂະແໜງ ແຮງງານ ແລະ ສະຫວັດດີການສັງຄົມ ມີຄວາມຈໍາເປັນຕ້ອງໄດ້ຕິດຕາມ ເບິ່ງແຍງສຸຂະພາບຂອງຜູ້ອອກແຮງງານທຸກຄົນ ນັບແຕ່ມື້ເຂົ້າວຽກ ຈົນຮອດ ມື້ເສຍຊີວິດ ເຊິ່ງຕ້ອງໄດ້ມີການບັນທຶກຂໍ້ມູນ, ຕິດຕາມການເຄື່ອນໄຫວເຮັດວຽກ ແລະ ບັງຄັບໃຫ້ຫົວໜ່ວຍ ແຮງງານຕ້ອງກວດສຸຂະພາບຜູ້ອອກແຮງງານໃນແຕ່ລະປີ. ການກວດສຸຂະພາບແຮງງານ ແມ່ນອີງໃສ່ໜ້າທີ່ຕາມພາລະບົດບາດຂອງອົງການແຮງງານສາກົນ ທີ່ ສປປ ລາວເປັນສະມາຊິກ ເຊິ່ງໄດ້ກໍານົດບັນຊີພະຍາດ ທີ່ສາມາດເກີດມາຈາກການເຮັດວຽກໄດ້, ເຊິ່ງກະຊວງແຮງງານ ກໍ່ໄດ້ກໍານົດເປັນຂໍ້ຕົກລົງຂອງລັດຖະມົນຕີ ກ່ຽວກັບບັນຊີພະຍາດອາຊີບຂອງ ສປປ ລາວ ທີ່ກະຊວງຕ້ອງໄດ້ຕິດຕາມ ແລະ ປ້ອງກັນບໍ່ໃຫ້ເກີດໃນສະຖານທີ່ເຮັດວຽກ.<br>• **ຄໍາເຫັນຂອງ ທ່ານຮອງນາຍົກລັດຖະມົນຕີຜູ້ຊີ້ນໍາ**: ໂດຍພື້ນຖານ ແມ່ນໃຫ້ສືບຕໍ່ປະຕິບັດຕາມພັນທະສາກົນ, ແລະ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສືບຕໍ່ປຶກສາຫາລື ລົງເລິກລາຍລະອຽດກັບກະຊວງສາທາລະນະສຸກ ແລະ ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດລາວ |
| 2 | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ສະເໜີໃຫ້ ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ພິຈາລະນາລຶບລ້າງຂອດການອອກໃບອະນຸຍາດການໃຫ້ບໍລິການກວດສຸຂະພາບຂອງຕົນ, ແລະ ໃຫ້ເປັນຄວາມຮັບຜິດຊອບຂອງຂະແໜງສາທາລະນະສຸກ ຕາມພາລະບົບບາດຂອງຂະແໜງສາທາລະນະສຸກ ເພື່ອເປັນການເປີດກວ້າງການແຂ່ງຂັນໃນທຸລະກິດການບໍລິການກວດສຸຂະພາບແຮງງານ, ເຮັດໃຫ້ຫົວໜ່ວຍແຮງງານມີທາງເລືອກທີ່ຫຼາຍຂຶ້ນ ແລະ ມີຄ່າໃຊ້ຈ່າຍທີ່ໜ້ອຍລົງ. ຫຼັງຈາກນັ້ນ ຂະແໜງແຮງງານ ກໍ່ສາມາດສົມທົບກັບຂະແໜງສາທາລະນະສຸກ ເພື່ອເຊື່ອມຕໍ່ ຫຼື ຄຸ້ມຄອງຂໍ້ມູນກ່ຽວກັບການກວດສຸຂະພາບຂອງແຮງງານ. | ອີງຕາມຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມີນາ 2023: ກະຊວງແຮງງານ ເຫັນວ່າ ການອະນຸຍາດດໍາເນີນທຸລະກິດກວດສຸຂະພາບແຮງງານປະຈໍາປີຍັງຄວນຮັກສາໄວ້ໃນຄວາມຮັບຜິດຊອບ ແລະ ໜ້າທີ່ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມຢູ່. ເພື່ອຜົນປະໂຫຍດຂອງຜູ້ເຮັດວຽກ, ຄວາມສະດວກໃນການດໍາເນີນທຸລະກິດຂອງພາກທຸລະກິດ, ກະຊວງແຮງງານມີຄວາມຍິນດີ ຈະປຶກສາຫາລື ເພີ່ມເຕີມກັບກະຊວງ ສາທາລະນະສຸກ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງເພື່ອແກ້ໄຂບັນຫາ.<br>ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເຫັນວ່າ ບໍ່ມີຄວາມຈໍາເປັນໃນການປັບປຸງຂອດການອອກອະນຸຍາດເພີ່ມເຕີມ, ແຕ່ ມີແຜນໃນການຂະຫຍາຍຈໍານວນໂຮງໝໍທີ່ສາມາດໃຫ້ບໍລິການກວດສຸຂະພາບແຮງງານໃຫ້ຫຼາຍຂຶ້ນ. |

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 3 | ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ | ສະເໜີໃຫ້ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນໃຈກາງປະສານງານກັບຂະແໜງ ການປ້ອງກັນຄວາມສະຫງົບ ເພື່ອພິຈາລະນາລົບລ້າງຂັ້ນຕອນການອະນຸມັດໃບແຈ້ງລາຍຊື່ນັກທ່ອງທ່ຽວທີ່ເຂົ້າມາໃນ ສປປ ລາວ ຢ່າງເປັນຮູບປະທຳ. | • ໜັງສືແຈ້ງຕອບຈາກກົມຄຸ້ມຄອງການທ່ອງທ່ຽວ (1167/ຄກທ, 17 ພະຈິກ 2022) ເລື່ອງການລາຍງານຄວາມຄືບໜ້າການແກ້ໄຂບັນຫາທີ່ຕິດພັນກັບການທ່ອງທ່ຽວທີ່ພາກທຸລະກິດຍົກຂຶ້ນໃນກອງປະຊຸມຄັ້ງທຸລະກິດລາວຜ່ານມາ.<br>• ບົດບັນທຶກກອງປະຊຸມທຸລະກິດລາວ ຄັ້ງທີ 10, 11,12<br>• ໜັງສືແຈ້ງຕອບ ຂອງ ກົມຕຳຫຼວດທ່ອງທ່ຽວ, ກະຊວງປ້ອງກັນຄວາມສະຫງົບ, ສະບັບເລກທີ 249/ຕທທ, ລົງວັນທີ 29 ເມສາ 2020<br>• **ຜົນການປຶກສາຫາລື ຈາກກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ (ບັນຫາທີ່ຕິດພັນກັບການທ່ອງທ່ຽວ) ຄັ້ງວັນທີ 17 ກັນຍາ 2019 ແລະ ຄັ້ງວັນທີ** 23 ຕຸລາ 2019<br>• ອີງຕາມເອກະສານອ້າງອີງຕາມຂ້າງເທິງ ສະຫຼຸບໄດ້ວ່າ ກະຊວງປ້ອງກັນຄວາມສະຫງົບແຈ້ງຕອບຊັດເຈນວ່າບໍ່ສາມາດລົບລ້າງຂອດດັ່ງກ່າວໄດ້ ດ້ວຍເຫດຜົນທາງດ້ານຄວາມປອດໄພຂອງນັກທ່ອງທ່ຽວທີ່ເຂົ້າມາ ສປປ ລາວ |
| 4 | ທະນາຄານ ແຫ່ງ ສປປ ລາວ | ເພື່ອເປັນການສົ່ງເສີມໃຫ້ມີການຊົມໃຊ້ຖານຂໍ້ມູນຂ່າວສານສິນເຊື່ອໃຫ້ຫລາຍຂຶ້ນ ຄວນເກັບຄ່າບໍລິການທັງໝົດລວມຢູ່ໃນຄ່າສະມາຊິກປະຈຳປີ ເພື່ອຫລຸດຜ່ອນຄ່າໃຊ້ຈ່າຍລົງ. | • ອີງຕາມໜັງສືແຈ້ງຕອບ ຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເລກທີ 193/ຂສລ ວັນທີ 29 ເມສາ 2020: ສຳລັບຄ່າບໍລິການຂໍ້ມູນຂ່າວສານສິນເຊື່ອ ແມ່ນບໍ່ທັນມີແຜນປັບປຸງເພີ່ມເຕີມ. |
| 5 | ກະຊວງການເງິນ | ສະເໜີໃຫ້ລັດຖະບານແຕ່ງຕັ້ງໜ່ວຍງານເອກະລາດໃນການຕິດຕາມການຈັດຕັ້ງປະຕິບັດ ລັດຖະບັນຍັດ ເລກທີ 002/ປປທ ໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນການຈັດຕັ້ງປະຕິບັດລັດຖະບັນຍັດ ເລກທີ 002/ປປທ ຢ່າງເປັນເອກະພາບທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ, ທັງເປັນໜ່ວຍງານຮັບຄຳຮ້ອງຟ້ອງກໍລະນີມີການເກັບຄ່າທຳນຽມທີ່ບໍ່ຖືກຕ້ອງຕາມລັດຖະບັນຍັດປະທານປະເທດ. ສະເໜີໃຫ້ຕັ້ງໜ່ວຍງານບໍລິການສຳລັບຮັບຄຳ ຮ້ອງຟ້ອງໃຫ້ພາກທຸລະກິດ ລະດັບ ເມືອງ, ແຂວງ ແລະ ສູນກາງ ແລະ ຕ້ອງເຜີຍແຜ່ ການບໍລິການນີ້ໃຫ້ພາກທຸລະກິດ ແລະ ບຸກຄົນທົ່ວໄປຮັບຊາບ | **ອີງຕາມຜົນຈາກກອງປະຊຸມປຶກສາຫາລືກະກຽມໃຫ້ແກ່ກອງປະຊຸມທຸລະກິດລາວຄັ້ງທີ 14 ຄັ້ງວັນທີ 21 ມິນາ 2023**<br>• ປະຈຸບັນ ກົມສ່ວຍສາອາກອນ ເຮັດໜ້າທີ່ດັ່ງກ່າວ, ແລະ ມີສາຍດ່ວນກະຊວງການເງິນ (1599) ເພື່ອຮັບຄຳຮ້ອງຟ້ອງ.<br>• ໄດ້ພັນຂະຫຍາຍລະບົບທັນສະໄໝໃນການເກັບຄ່າທຳນຽມ ແລະ ຄ່າບໍລິການໄປ 4 ຂະແໜງ ການ, ອາດມີແຜນໃນການຂະຫຍາຍເພີ່ມເຕີມ ແຕ່ຕ້ອງໄດ້ຄົ້ນຄວ້າດ້ານງົບປະມານ<br>• ຄຳເຫັນຂອງຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳ: ເຫັນວ່າບໍ່ຄວນຕັ້ງໜ່ວຍງານໃໝ່ເພີ່ມເຕີມ, ແລະ ໃຫ້ນຳໃຊ້ໜ່ວຍງານທີ່ມີຢູ່ |

| ບັນຫາ | ຂະແໜງການກ່ຽວຂ້ອງຫຼັກ | ຂໍ້ສະເໜີ | ອ້າງອີງ |
|---|---|---|---|
| 6 | ກະຊວງການເງິນ | ສະເໜີໃຫ້ກົມບັນຊີ ອະທິບາຍວິທີການຮັບຮູ້ລາຍຮັບ ສໍາລັບຜູ້ຜະລິດສິ່ງອອກແບບ CMT ແລະ ສະເໜີໃຫ້ມີການ ຮີບຮ້ອນສົ່ງຄືນເງິນ ອມພ ຕາມລະບຽບ ອມພ, ຫຼື ຂໍໃຫ້ມີຄໍາຕອບແລະເຫດຜົນກໍານົດເວລາທີ່ຊັດເຈນໃຫ້ກັບຜູ້ສົ່ງອອກແບບ CMT ທີ່ໄດ້ຍື່ນເອກະສານຂໍຄືນເງິນ ອມພ ຜ່ານມາ ແຕ່ ຍັງບໍ່ໄດ້ຮັບເງິນ ອມພ ຄືນວ່າເວລາໃດຈຶ່ງຈະສົ່ງຄືນໄດ້. | • ບົດບັນທຶກກອງປະຊຸມທຸລະກິດລາວ ຄັ້ງທີ 10, 11,12<br>• ຜົນຈາກກອງປະຊຸມເຜີຍແຜ່ຄໍາແນະນໍາຈັດຕັ້ງປະຕິບັດກົດໝາຍອາກອນມູນຄ່າເພີ່ມ ຈັດໂດຍກົມສ່ວຍສາອາກອນ: ກົມສ່ວຍສາອາກອນແຈ້ງວ່າ ກໍລະນີການເຄື່ອນໄຫວທຸລະກິດ ມີລາຍຮັບພຽງແຕ່ຄ່າແຮງງານ ແມ່ນຖືວ່າເປັນກິດຈະການດ້ານການສະໜອງການບໍລິການ, ເຊິ່ງການບໍລິການ ບໍ່ຖືວ່າມີການສົ່ງອອກ, ສະນັ້ນຈະຕ້ອງຖືກເສຍອາກອນມູນຄ່າເພີ່ມຕາມທີ່ກໍານົດໄວ້ໃນກົດໝາຍ ອາກອນມູນຄ່າເພີ່ມ. |
| 7 | ກະຊວງການເງິນ | ສະເໜີໃຫ້ກົມພາສີ ຕັດຂອດການຂໍອະນຸຍາດລາຍການຂົນສົ່ງສິນຄ້າຜ່ານແດນ ສໍາລັບສິນຄ້າທົ່ວໄປທີ່ບໍ່ແມ່ນ ສິນຄ້າເກືອດຫ້າມ ທີ່ພາກທຸລະກິດຕ້ອງໄດ້ຂໍລ່ວງໜ້າ | • ອີງຕາມ ບົດບັນທຶກກອງປະຊຸມທຸລະກິດລາວ ຄັ້ງທີ 13 ແລະ ຜົນຂອງກອງປະຊຸມປຶກສາຫາລື ລະຫວ່າງ ຂະແໜງການກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ (ບັນຫາທີ່ຕິດພັນກັບການອໍານວຍຄວາມສະດວກ ທາງດ້ານການຄ້າ ແລະ ພາສີ-ອາກອນ) ຄັ້ງວັນທີ 16 ກັນຍາ 2020, ກົມພາສີແຈ້ງວ່າ ບໍ່ສາມາດ ຕັດຂອດການຂໍອະນຸຍາດລາຍການຂົນສົ່ງສິນຄ້າຜ່ານແດນ ສໍາລັບສິນຄ້າທົ່ວໄປທີ່ບໍ່ແມ່ນ ສິນຄ້າເກືອດຫ້າມ ທີ່ພາກທຸລະກິດຕ້ອງໄດ້ຂໍລ່ວງໜ້າ.<br>• ອີງຕາມໜັງສືແຈ້ງຕອບໃນ ເດືອນມັງກອນ 2023, ກົມພາສີ ແຈ້ງເພີ່ມເຕີມວ່າ ປະຈຸບັນພວມຄົ້ນຄວ້າປັບປຸງລະບຽບຄຸ້ມຄອງສິນຄ້າຜ່ານແດນ ແລະ ຈະພິຈາລະນາການສະເໜີດັ່ງກ່າວເພີ່ມເຕີມ |
| 8 | ກະຊວງການເງິນ | ເພື່ອເປັນການສົ່ງເສີມຄວາມສາມາດການແຂ່ງຂັນຂອງການສະໜອງການບໍລິການຂົນສົ່ງ ໃນສປປ ລາວ, ພ້ອມທັງປະຕິບັດຕາມທິດທາງຂອງລັດຖະບານໃນການຫັນປ່ຽນປະເທດທີ່ບໍ່ມີຊາຍແດນຕິດຈອດກັບທະເລມາເປັນປະເທດເຊື່ອມຈອດ, ສະເໜີໃຫ້ກົມສ່ວຍສາອາກອນ ພິຈາລະນາ ຍົກເວັ້ນການເກັບອາກອນມູນຄ່າເພີ່ມຈາກຄ່າບໍລິການຂົນສົ່ງສິນຄ້າຜ່ານແດນສາກົນ ແລະ ການບໍລິການຂົນສົ່ງສິນຄ້າຂ້າມແດນ ເນື່ອງຈາກເຫັນວ່າ ຂັດກັບຫຼັກການສາກົນ ແລະ ສົນທິສັນຍາຕ່າງໆ ທີ່ ສປປ ລາວ ເປັນພາຄີ. | ອີງຕາມໜັງສືແຈ້ງ ສະບັບເລກທີ 4015/ກສອ, ລົງວັນທີ 18 ພະຈິກ 2020 ເຖິງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ: ກົມສ່ວຍສາອາກອນ ແຈ້ງວ່າ ການປະຕິບັດການຍົກເວັ້ນ ອມພ ຂອງການຂົນສົ່ງຜ່ານແດນສາກົນ ຕາມມາດຕາທີ 12 ຂໍ້ 2.10 ຂອງ ກົດໝາຍ ອມພ ແມ່ນສະໜອງການຂົນສົ່ງຕາມທີ່ໄດ້ນິຍາມຄໍາສັບໄວ້ໃນມາດຕາ 3 ຂໍ້ 13 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມເທົ່ານັ້ນ, ສະນັ້ນ ໝາຍວ່າ ການບໍລິການຂົນສົ່ງສິນຄ້າຈາກປະເທດໜຶ່ງ ຜ່ານ ສປປ ລາວ ໄປປະເທດທີ ສາມ ເທົ່ານັ້ນ ຈຶ່ງຖືວ່າເປັນການຂົນສົ່ງຜ່ານແດນສາກົນທີ່ຖືກຍົກເວັ້ນ ຕາມກໍານົດໃນກົດໝາຍ ອມພ. ສໍາລັບການບໍລິການຂົນສົ່ງຂ້າມແດນເປັນການບໍລິການທີ່ຖືກເສຍ ອມພ ຕາມທີ່ກໍານົດໃນມາດຕາທີ 11 ຂໍ້ 2, 3 ແລະ 4 ຂອງ ກົດໝາຍ ອມພ |